swisscontact




# ຂໍເຊີນ ພາກສ່ວນ ບັນດາສະມາຄົມ ແລະ ອົງການຈັດຕັ້ງ ທີ່ມີຄວາມສົນໃຈ ເປັນຄູ່ຮ່ວມງານໃນການຈັດຕັ້ງປະຕິບັດ ການໃຫ້ຄໍາປຶກສາດ້ານການມີວຽກເຮັດງານທໍາ, ພາຍໃຕ້ ໂຄງການ ຝຶກອົບຮົມວິຊາຊີບ ແລະ ສະໜັບ ສະໜູນການມີວຽກເຮັດງານທໍາ (VTESS).

ໄລຍະເວລາຂອງ**ສັນຍາການຮ່ວມມື**: **12 ເດືອນ** (ເລີ່ມແຕ່ເດືອນມີນາ 2026 ຫາ ກຸມພາ 2027);
**ເປົ້າໝາຍສະໝັກ:** ບັນດາສະມາຄົມ, ອົງການຈັດຕັ້ງພາກລັດ ແລະ ພາກເອກະຊົນໃດໜຶ່ງ **ທີ່ນອນໃນ** ແຂວງອຸດົມໄຊ, ແຂວງໄຊຍະບູລີ, ແຂວງຊຽງຂວາງ, ແຂວງຄໍາມ່ວນ, ແຂວງສາລະວັນ ແລະ ນະຄອນຫຼວງວຽງຈັນ;

ໂຄງການຝຶກອົບຮົມວິຊາຊີບ ແລະ ສະໜັບສະໜູນການມີວຽກເຮັດງານທໍາ ($VTESS_2$) ແມ່ນເລີ່ມແຕ່ ເດືອນທັນວາ 2023 ຫາ ເດືອນພະຈິກ 2027, ມີ ເປົ້າໝາຍເລັງໃສ່ເພື່ອສະໜອງການຝຶກອົບຮົມວິຊາຊີບ ທີ່ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ໂດຍສຸມໃສ່ກຸ່ມໄວໜຸ່ມຜູ້ດ້ອຍໂອກາດທີ່ ຮຽນຈົບຊັ້ນປະຖົມ ຫຼື ຈົບຊັ້ນມັດທະຍົມຕອນຕົ້ນ, ທີ່ມີອາຍຸລະຫວ່າງ 15-35 ປີ, ເພື່ອຊ່ວຍໃຫ້ເຂົາເຈົ້າມີວຽກເຮັດງານທໍາ, ສາມາດປະກອບອາຊີບດ້ວຍຕົນເອງ ຫຼື ກັບຄືນເຂົ້າສູ່ລະບົບການສຶກສາ ໂດຍຜ່ານວົງຈອນການໃຫ້ຄໍາປຶກສາດ້ານການມີວຽກເຮັດງານທໍາ. ເຊິ່ງກຸ່ມເປົ້າໝາຍດັ່ງກ່າວ ຈະໄດ້ເຂົ້າຮ່ວມ ການໃຫ້ຄໍາປຶກສາ ເປັນໄລຍະເວລາ ທັງໝົດ 9 ເດືອນ.

ສະນັ້ນ, ໂຄງການ $VTESS_2$ ກໍາລັງຊອກຫາ ຄູ່ຮ່ວມງານ ທີ່ມີຄວາມສົນໃຈຮ່ວມມືໃນການຈັດຕັ້ງປະຕິບັດກິດຈະກໍາໂດຍການ ສະໝັກເປັນຜູ້ໃຫ້ຄໍາປຶກສາດ້ານການມີວຽກເຮັດງານທໍາ ເພື່ອເຂົ້າຮ່ວມຝຶກອົບຮົມ “ການເປັນຜູ້ໃຫ້ຄໍາປຶກສາ”;

# ຂໍ້ແນະນຳກ່ຽວກັບການປະກອບແບບຟອມສະໝັກ

ຜູ້ທີ່ຈະສະໝັກ ເປັນ ຜູ້ໃຫ້ຄຳປຶກສາ ຕ້ອງເປັນພະນັກງານ ທີ່ນອນຢູ່ໃນບັນດາສະມາຄົມ, ອົງການຈັດຕັ້ງພາກລັດ ແລະ ພາກເອກະຊົນໃດໜຶ່ງ, ແມ່ນຖືເປັນເງື່ອນໄຂຫຼັກ.

## ເງື່ອນໄຂ ລວມມີດັ່ງນີ້:

- ສຳລັບພາກສ່ວນບັນດາສະມາຄົມ, ອົງການຈັດຕັ້ງພາກລັດ ແລະ ພາກເອກະຊົນ **ທີ່ຈະສະໝັກ ເປັນຄູ່ຮ່ວມງານ:**
    1. ມີປະສົບການ ເຮັດວຽກກັບໄວໜຸ່ມກຸ່ມຜູ້ດ້ອຍໂອກາດ;
    2. ມີປະສົບການ ປະຕິບັດກິດຈະກຳໂຄງການ/ກ່ຽວກັບການຝຶກອົບຮົມວິຊາຊີບ, ການແນະນຳດ້ານອາຊີບ ແລະ ການສະໜັບສະໜູນການຊອກວຽກ;
    3. ມີສະຖານທີ່ ທີ່ເໝາະສົມ (ເຊັ່ນ: ຫ້ອງປະຊຸມ ຫຼື ຫ້ອງໃຫ້ຈັດກິດຈະກຳ) ເພື່ອນຳໃຊ້ເຂົ້າໃນການຈັດກິດຈະກຳໃຫ້ຄຳປຶກສາ ເປັນກຸ່ມ ແລະ ເປັນລາຍບຸກຄົນ, ສະເລ່ຍສາມາດຮອງຮັບຜູ້ເຂົ້າຮ່ວມໄດ້ປະມານ 15-20 ຄົນ;
    4. ມີພະນັກງານ ຜູ້ທີ່ຖືກເງື່ອນໄຂ ເພື່ອສະໝັກເປັນຜູ້ໃຫ້ຄຳປຶກສາ ແລະ ປະຕິບັດການໃຫ້ຄຳປຶກສາ ຮ່ວມກັບ ໄວໜຸ່ມກຸ່ມເປົ້າໝາຍ;
    5. ສາມາດຈັດສັນເວລາເຕັມສ່ວນ ແລະ ອຳນວຍຄວາມສະດວກ ໃຫ້ແກ່ ພະນັກງານຜູ້ທີ່ຖືກຄັດເລືອກ ເປັນຜູ້ໃຫ້ຄຳປຶກສາ ໃນການຮ່ວມມືຈັດຕັ້ງປະຕິບັດກິດຈະກຳ ຮ່ວມກັບໂຄງການ.
- ສຳລັບ ຜູ້ສະໝັກ **ເປັນຜູ້ໃຫ້ຄຳປຶກສາ**:
    1. ມີອາຍຸ ລະຫວ່າງ 25 ຫາ 45 ປີ.
    2. ມີຄວາມຮູ້ ແລະ ປະສົບການ ໃນການເຮັດວຽກກັບໄວໜຸ່ມກຸ່ມຜູ້ດ້ອຍໂອກາດ *(ເຊັ່ນ: ວຽກການສິດສອນ, ວຽກພັດທະນາໄວໜຸ່ມ, ວຽກພັດທະນາຊຸມຊົນ, ວຽກສັງຄົມສົງເຄາະ, ວຽກງານການໃຫ້ຄຳປຶກສາ ແລະ ອື່ນໆ ທີ່ກ່ຽວຂ້ອງ);*
    3. ມີປະສົບການເຮັດວຽກ ຫຼື ຮ່ວມມື ກັບ ຜູ້ປະກອບການ;
    4. ສາມາດຈັດສັນເວລາ ໃນການດຳເນີນກິດຈະກຳ ການໃຫ້ຄຳປຶກສາ ໃຫ້ແກ່ກຸ່ມເປົ້າໝາຍໄດ້;
    5. ສາມາດເຂົ້າຮ່ວມຝຶກອົບຮົມ ການເປັນຜູ້ໃຫ້ຄຳປຶກສາ ຕາມແຜນທີ່ວາງໄວ້;

## ວິທີປະກອບແບບຟອມສະໝັກ: *(ໃຫ້ປະກອບ 2 ແບບຟອມ ໂດຍລາຍລະອຽດດັ່ງລຸ່ມນີ້)*

- **ແບບຟອມທີ 1** ແມ່ນ ສຳລັບ **ອົງການຈັດຕັ້ງ ທີ່ສົນໃຈສະໝັກເປັນຄູ່ຮ່ວມງານ** ໃຫ້ຕື່ມຂໍ້ມູນສະໝັກຕາມລາຍລະອຽດ ທີ່ລະບຸໃນແບບຟອມ, ທ່ານສາມາດໂຫຼດເອົາແບບຟອມສະໝັກ ໃນລິ້ງນີ້ **ແບບຟອມທີ 1;**
- **ແບບຟອມທີ 2** ແມ່ນສຳລັບ **ຜູ້ສົນໃຈສະໝັກ ເປັນຜູ້ໃຫ້ຄຳປຶກສາ** ຕ້ອງເປັນພະນັກງານ ທີ່ນອນຢູ່ອົງການຈັດຕັ້ງດັ່ງກ່າວ, ໃຫ້ຕື່ມຂໍ້ມູນສະໝັກຕາມລາຍລະອຽດ ທີ່ລະບຸໃນແບບຟອມ, ທ່ານສາມາດໂຫຼດເອົາແບບຟອມສະໝັກ ໃນລິ້ງນີ້ **ແບບຟອມທີ 2.**

**ໝາຍເຫດ:** ໃນກໍລະນີ ທີ່ອົງການຈັດຕັ້ງໃດໜຶ່ງ ຫາກມີຜູ້ສົນໃຈສະໝັກຫຼາຍກວ່າ 1 ຄົນຂຶ້ນໄປ ຈະຕ້ອງປະກອບແບບຟອມຂອງໃຜລາວ (ສະເພາະແບບຟອມທີ 2).

## ໄລຍະເວລາ ການຮັບສະໝັກ:

**ເປີດຮັບສະໝັກ ເລີ່ມແຕ່ວັນທີ** 14 ມັງກອນ, 2026 **ແລະ ປິດຮັບສະໝັກ ໃນວັນທີ** 30 ມັງກອນ, 2026

**ສອບຖາມລາຍລະອຽດ** ແລະ **ສົ່ງ ແບບຟອມສະໝັກ** ມາຍັງໂຄງການ VTESS ຕາມລາຍລະ ອຽດລຸ່ມນີ້:

ໂທ/WhatsApp: +85620 5690 4769 (ນາງ ພິຈິດຕາ ພະເມືອງ)

ຫຼື ສາມາດສົ່ງແບບຟອມສະໝັກຜ່ານມາທາງອີເມວ phichitta.phamuang@swisscontact.org

*ໝາຍເຫດ: ກະລຸນາຕິດຕໍ່ ຕາມມື້ ແລະ ໂມງລັດຖະການ*